## ຂໍ້ມູນການຊ່ວຍເຫຼືອທາງການເງິນ

ພວກເຮົາສາມາດຊ່ວຍເລື່ອງບິນທາງການແພດຂອງທ່ານ.
ທ່ານອາດມີຄຸນສົມບັດຮັບການຊ່ວຍເຫຼືອທາງການເງິນ

ພວກເຮົາສະເໜີ:

- ການບໍລິການເບິ່ງແຍງທີ່ບໍ່ມີຄ່າໃຊ້ຈ່າຍ ຫຼື ລາຄາຕໍ່າສໍາລັບຜູ້ທີ່ມີສິດ
- ບໍ່ມີດອກເບ້ຍ, ແຜນການຈ່າຍເງິນໄລຍະຍາວ
- ການຊ່ວຍເຫຼືອໃນການຮັບການຄຸ້ມຄອງສຸຂະພາບ

ສຶກສາເພີ່ມເຕີມກ່ຽວກັບການມີສ່ວນຫຼຸດ ແລະ ແຜນງານການບໍລິການເບິ່ງແຍງແບບການກຸສົນ, ວິທີສະໝັກ, ຂໍ້ມູນການມີສິດ ແລະ ສ່ວນຫຼຸດໂຮງໝໍ ແລະ ນະໂຍບາຍການເບິ່ງແຍງແບບການກຸສົນໂດຍການເຂົ້າເບິ່ງ: http://www.providence.org/FinancialHelp?

ສຶກສາເພີ່ມເຕີມກ່ຽວກັບການມີສ່ວນຫຼຸດ ແລະ ແຜນງານການບໍລິການເບິ່ງແຍງແບບການກຸສົນ, ວິທີສະໝັກ, ຂໍ້ມູນການມການມີສິດຮັບການຊ່ວຍເຫຼືອທາງການເງິນແມ່ນກໍານົດໂດຍນໍາໃຊ້ເກນເງື່ອນໄຂຕ່າງໆ, ລວມທັງບ່ອນທີ່ທ່ານອາໄສຢູ່,ຂະໜາດຄົວເຮືອນ ແລະ ລາຍຮັບຂອງທ່ານ. ເຄື່ອງຄິດໄລ່ຂອງພວກເຮົາ (ມີຢູ່ໃນເວັບໄຊຂ້າງເທິງ) ນໍາໃຊ້ຂໍ້ມູນປະເພດນີ້ເພື່ອຊ່ວຍກໍານົດສິດທີ່ອາດຈະມີ. ໂດຍຂຶ້ນກັບລັດ ແລະ ຂະໜາດຄົວເຮືອນຂອງທ່ານ, ທ່ານອາດຈະມີຄຸນສົມບັດຮັບການຊ່ວຍເຫຼືອ ຖ້າລາຍໄດ້ປະຈໍາປີທັງໝົດຂອງຄົວເຮືອນແມ່ນຕໍ່າກວ່າ 175-400% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ.ິສິດ ແລະ ສ່ວນຫຼຸດໂຮງໝໍ ແລະ ນະໂຍບາຍການເບິ່ງແຍງແບບການກຸສົນໂດຍການເຂົ້າເບິ່ງ:

ຫຼື ສະແກນລະຫັດ QR:
[ລວມທັງລະຫັດ QR ທີ່ມີຢູ່]

## ຕິດຕໍ່ທີ່ປຶກສາດ້ານການເງິນ

ຊອກເບິ່ງວ່າທ່ານມີທາງເລືອກສໍາລັບການຊ່ວຍເຫຼືອທາງການເງິນໃດແດ່ ແລະ ຮັບການຊ່ວຍເຫຼືອຈາກທີມງານຂອງພວກເຮົາ.
855-229-6466
ວັນຈັນ – ວັນສຸກ, 7 ໂມງເຊົ້າ ຫາ 5:30 ໂມງແລງ PT

## ຄວາມໂປ່ງໃສດ້ານລາຄາ

ໃນປີ 2018, ສູນ Medicare (Centers for Medicare) ແລະ Medicaid ໄດ້ອອກຄໍາແນະນໍາໃຫ້ໂຮງໝໍ ເພື່ອສະໜອງລາຍການກ່ຽວກັບຄ່າບໍລິການມາດຕະຖານຂອງເຂົາເຈົ້າທາງອອນລາຍ. ຢ່າງໃດກໍຕາມ, ຄ່າບໍລິການຂອງໂຮງໝໍບໍ່ມີພາບລວມກ່ຽວກັບສິ່ງທີ່ໂຮງໝໍຈະຈ່າຍ. ພວກເຮົາຫວັງວ່າທ່ານຈະໃຊ້ຕົວປະເມີນລາຄາທີ່ມີປະໂຫຍດຂອງພວກເຮົາສໍາລັບຄ່າໃຊ້ຈ່າຍທີ່ຕ້ອງຈ່າຍເອງໂດຍການເຂົ້າເບິ່ງ: https://www.providence.org/billing-support/price-estimate

ລາຍການບໍລິການທີ່ສາມາດຊື້ໄດ້ແມ່ນມີຢູ່ໃນ https://www.providence.org/billing-support/pricing-transparency

## ຊ່ວຍຈ່າຍບິນຂອງທ່ານ

ມີອົງກອນຊ່ວຍເຫຼືອຜູ້ບໍລິໂພກໂດຍບໍ່ມີຄ່າໃຊ້ຈ່າຍທີ່ຈະຊ່ວຍທ່ານມີຄວາມເຂົ້າໃຈກ່ຽວກັບການຮຽກເກັບເງິນ ແລະ ຂັ້ນຕອນການຈ່າຍ. ທ່ານສາມາດໂທຫາ Health Consumer Alliance ທີ່ໝາຍເລກ 888-804-3536 ຫຼື ໄປທີ່ healthconsumer.org ສໍາລັບຂໍ້ມູນເພີ່ມເຕີມ.

ນອກຈາກແຜນງານການຊ່ວຍເຫຼືອທາງການເງິນຂອງ Providence, ຍັງມີທາງເລືອກອື່ນເພື່ອຊ່ວຍຫຼຸດ ແລະ ກໍາຈັດຄ່າໃຊ້ຈ່າຍໃນການບໍລິການເບິ່ງແຍງ. ພວກເຮົາສາມາດຊ່ວຍທ່ານສະໝັກ Medicare, Medicaid ແລະ ແຜນງານອື່ນໆເຊັ່ນ: ການມີສິດໃນ Covered California ແລະ Medi-Cal.

## ແຜນງານຮ້ອງຮຽນກ່ຽວກັບບິນໂຮງໝໍ (Hospital Bill Complaint Program)

ແຜນງານຮ້ອງຮຽນກ່ຽວກັບບິນໂຮງໝໍແມ່ນແຜນງານຂອງລັດ, ເຊິ່ງກວດສອບຄໍາຕັດສິນຂອງໂຮງໝໍ ເພື່ອເບິ່ງວ່າທ່ານມີຄຸນສົມບັດສໍາລັບການຊ່ວຍເຫຼືອໃນການຈ່າຍຄ່າບິນໂຮງໝໍຂອງທ່ານບໍ່. ຖ້າທ່ານຄິດວ່າທ່ານຖືກປະຕິເສດການຊ່ວຍເຫຼືອທາງການເງິນໂດຍບໍ່ຖືກຕ້ອງ, ທ່ານສາມາດຍື່ນຄໍາຮ້ອງຮຽນກັບແຜນງານຮ້ອງຮຽນກ່ຽວກັບບິນໂຮງໝໍ. ໄປທີ່ HospitalBillComplaintProgram.hcai.ca.gov ສໍາລັບຂໍ້ມູນເພີ່ມເຕີມ ແລະ ຍື່ນຄໍາຮ້ອງຮຽນ.

## ການແປພາສາ ແລະ ຮູບແບບທີ່ສາມາດເຂົ້າເຖິງ

ໝາຍເຫດ: ຖ້າທ່ານຕ້ອງການຊ່ວຍເຫຼືອກັບພາສາຂອງທ່ານ, ກະລຸນາໂທຫາ 1-888-311-9127 ຫຼື ໄປຫາຄລີນິກໃນໂຮງໝໍທີ່ໃກ້ທ່ານໃນ Providence. ຫ້ອງການເປີດແຕ່ 8:00 ໂມງເຊົ້າ ຫາ 4:30 ໂມງແລງ ແລະ ຕັ້ງຢູ່ຫ້ອງການໃຫ້ຄໍາປຶກສາດ້ານການເງິນ (Financial Counseling Office). ນອກຈາກນັ້ນແມ່ນຍັງມີການຊ່ວຍເຫຼືອ ແລະ ການບໍລິການສໍາລັບບຸກຄົນທີ່ມີຄວາມພິການ, ເຊັ່ນ: ເອກະສານທີ່ເປັນອັກສອນນູນ,ຕົວພິມໃຫຍ່, ສຽງ ແລະ ຮູບແບບອີເລັກໂທຣນິກອື່ນໆທີ່ສາມາດເຂົ້າເຖິງໄດ້. ການບໍລິການເຫຼົ່ານີ້ແມ່ນບໍ່ມີຄ່າໃຊ້ຈ່າຍ. ສໍາເນົາເອກະສານທີ່ແປແລ້ວແມ່ນສາມາດເບິ່ງໄດ້ທີ່ www.providence.org/financialhelp